## ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 24 ກັນຍາ 2023 (09-24-2023)

---

## ຢູ່ຢ່າງກ້າຫານ

**ຈຸດສຳຄັນໃນບົດຮຽນ**: ເຮັດສິ່ງຖືກຕ້ອງໃນພຣະກຳລັງຂອງພຣະເຈົ້າ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ມື້ວານນີ້, ຂ້າພະເຈົ້າໄດ້ເວົ້າກັບນ້ອງສາວຜູ້ນຶ່ງຂອງຂ້າພະເຈົ້າທາງໂທຣະສັບ. ຄວາມຈິງແລ້ວ, ຂ້າພະເຈົ້າບໍ່ໄດ້ໃຊ້ມືຖື; ຂ້າພະເຈົ້າຢູ່ໃນຣົດ. ຂ້າພະເຈົ້າຮ້ອງດັງໆບອກໃຫ້ຣົດໂທຫານ້ອງສາວ. ນາງຕອບແລະເວົ້າວ່າ,"ຖ້າບຶດນຶ່ງ, ໃຫ້ຂ້ອຍເອົາໂທຣະສັບຂ້ອຍກ່ອນ. ຂ້ອຍກຳລັງເວົ້າຜ່ານໂມງຂອງຂ້ອຍ." ຄວາມສາມາດຕ່າງໆແບບນີ້ເຮົາເຄີຍເຫັນແຕ່ຢູ່ໃນປຶ້ມກາຕູນ ຫຼືພາພຍົນວິທຍາສາດ ຫຼືລາຍການໂຊໃນທີວີ. ແຕ່ວ່າດຽວນີ້, ໄດ້ກາຍເປັນສິ່ງທັມມະດາໄປແລ້ວ.

ຫຼາຍປີກ່ອນ, ຂ້າພະເຈົ້າໄດ້ຍິນໂຄສົກຜູ້ນຶ່ງຈັດລາຍການວິທຍຸຖແລງວ່າວັນນຶ່ງຫຼານຂອງເຮົາຈະຫົວຂວັນພວກເຮົາ. ເຂົາຈະເວົ້າວ່າ, "ພວກເຈົ້າໝາຍເຖິງ, ເຄີຍໄດ້ຈັບໂທຣະສັບທີ່ມີສາຍຫົກຟຸດຫຼືສັ້ນກວ່ານັ້ນຕໍ່ຈາກເຄື່ອງຕອບຮັບທີ່ຕິດກັບຝາເພື່ອເວົ້າກັບອີກບາງຄົນທີ່ໄກຈາກຝາຫົກຟຸດຄືກັນແມ່ນບໍ່?" ຂ້າພະເຈົ້າຍັງຈຳຄວາມຄິດນັ້ນ, *ຂ້າພະເຈົ້າຈະຕ້ອງໃຊ້ໂທຣະສັບທີ່ມີສາຍຕິດກັບຝາຕລອດ.* ວາວ ຂ້າພະເຈົ້າໄດ້ຄິດຜິດມາຕລອດ! ມັນໄດ້ຖືກປ່ຽນແປງມາກມາຍ.

ພວກເຮົາຈະຕອບສນອງຕໍ່ການປ່ຽນແປງນີ້ຢ່າງໃດ? ມີການປ່ຽນແປງອັນໃດທີ່ພວກເຮົາໂອບກອດເອົາ? ຈະມີຫຍັງເກີດຂຶ້ນເມື່ອປະເພນີປ່ຽນໄປໃນທາງກົງກັນຂ້າມກັບຄວາມເຊື່ອຂອງເຮົາ? ແມ່ນຫຍັງຄືສິ່ງທີ່ບໍ່-ມີການຕໍ່ລອງ, ແລະພວກເຮົາຈະຕັດສິນໃຈຢ່າງໃດ?

*ມີການປ່ຽນແປງຫຼືສິ່ງປະດິດສ້າງຂຶ້ນໃໝ່ອັນໃດໃນຊີວິດຂອງທ່ານທີ່ທ່ານຍິນດີຮັບເອົາ?*

**ພຣະຄັມພີກ່າວວ່າແນວໃດ:** (ເບິ່ງຕາມຂໍ້ 1, 2, ແລະ 3,)

### ການສຶກສາພຣະຄັມພີ

### 1. <u>ດານີເອນ 6:6-10</u>.

*6ດັ່ງນັ້ນ ພວກເຂົາຈຶ່ງເຂົ້າໄປເຝົ້າກະສັດດາຣິອຸດແລ້ວກາບທູນວ່າ, "ຂ້າແດ່ພຣະຣາຊາ ຂໍຊົງພຣະຈະເລີນເທີ້ນ 7ພວກຂ້ານ້ອຍທັງ*
*ໝົດ ຜູ້ບໍລິຫານຣາຊການແຜ່ນດິນຂອງພຣະອົງ ຄືຜູ້ກວດກາຣາຊການແຜ່ນດິນ ເຈົ້າແຂວງ ຮອງເຈົ້າແຂວງ ແລະທີ່ປຶກສາໄດ້ຕົກ*
*ລົງເຫັນດີກັນວ່າ ພຣະຣາຊາສົມຄວນຈະອອກຄຳສັ່ງໃຫ້ທຸກຄົນເຮັດຕາມຢ່າງເຂັ້ມງວດ ຄືໃຫ້ອອກຄຳສັ່ງວ່າໃນສາມສິບວັນນີ້ ບໍ່ໃຫ້*
*ຜູ້ໃດທູນຂໍສິ່ງນຶ່ງສິ່ງໃດຈາກພະ ຫລືຄົນໃດໆ ເວັ້ນໄວ້ແຕ່ທູນຂໍຈາກພຣະອົງ ຜູ້ໃດຝ່າຝືນຄຳສັ່ງນີ້ຈະຕ້ອງຖືກໂຍນເຂົ້າໄປໃນຖໍ້າສິງ.*
*8ດັ່ງນັ້ນ ຂໍພຣະອົງຊົງອອກຄຳສັ່ງນີ້ແລະລົງພຣະນາມໄວ້ເພື່ອຈະໄດ້ນຳອອກໃຊ້ບັງຄັບເປັນກົດໝາຍເມເດັຽ ແລະເປີເຊັຽ ອັນເປັນ*
*ກົດໝາຍທີ່ປ່ຽນແປງບໍ່ໄດ້." 9ດ້ວຍເຫດນີ້ ກະສັດດາຣິອຸດ ຈຶ່ງຊົງລົງພຣະນາມໃນໜັງສືຄຳສັ່ງເມື່ອດານີເອນຮູ້ວ່າ ກະສັດຊົງລົງພຣະ*
*ນາມໃນໜັງສືຄຳສັ່ງນັ້ນແລ້ວ ເພິ່ນກໍໄປຍັງເຮືອນຂອງຕົນ ໃນເຮືອນນັ້ນມີປ່ອງຢ້ຽມຊັ້ນເທິງສາມປ່ອງຢູ່ຊື່ນະຄອນເຢຣູຊາເລັມຢູ່ທີ່*
*ນັ້ນ ເພິ່ນໄດ້ຄູ້ເຂົ່າລົງຕໍ່ໜ້າປ່ອງຢ້ຽມທີ່ໄຂໄວ້ ແລ້ວອ້ອນວອນຕໍ່ພຣະເຈົ້າມື້ລະສາມເທື່ອ ເໝືອນທີ່ເຄີຍປະຕິບັດມາ.*

ປັນຍາຂອງດານີເອນ, ຊື່ສຽງທີ່ບໍ່ມີດ່າງພ້ອຍ, ແລະ ຄວາມສາມາດໃນການແກ້ບັນຫາທີ່ຊັບຊ້ອນໄດ້ເຮັດໃຫ້ລາວໂດດເດັ່ນຈາກຄົນອື່ນ. ລາວເປັນຜູ້ນຶ່ງໃນສາມຄົນທີ່ຖືກແຕ່ງຕັ້ງໃຫ້ດູແລ ຜູ້ປົກຄອງແຄ້ວນເປີເຊັຽ 120 ຄົນ (ໝາຍເຖິງຜູ້ປ້ອງກັນຣາຊອານາຈັກຫຼືແຜ່ນດິນ) ຜູ້ປົກຄອງແຄ້ວນຕ່າງໆ. ເຈົ້າໜ້າທີ່ທ້ອງຖິ່ນເຫຼົ່ານີ້ສຳຄັນເພາະເປັນຕຳແໜ່ງສູງສຸດ, ອານາຈັກເປີເຊັຽເປັນຣາຊອານາຈັກກວ້າງໃຫຍ່ທີ່ສຸດທີ່ເຄີຍປາກົດມີມາ.

- **ອຸບາຍ.** ຜູ້ກວດກາແຜ່ນດິນ ແລະເພື່ອນຮ່ວມດູແລຂອງດານີເອັນໄດ້ກາຍເປັນຜູ້ອິດສາເມື່ອເຂົາຮູ້ຈັກວ່າດານີເອນເກືອບຈະໄດ້ຖືກເລື່ອນຊັ້ນແລ້ວ; ພວກເຂົາຄິດກົນອຸບາຍເພື່ອຢາກກຳຈັດລາວອອກ. ພວກເຂົາຊາບດີວ່າ ດານີເອນເປັນຄົນມີຄວາມເຊື່ອເລິກເຊິ່ງແລະລາວຕ້ອງສະແດງຄວາມຈົງຮັກພັກດີຕໍ່ພຣະເຈົ້າແທນທີ່ຈະພັກດີຕໍ່ກະສັດ. ຖ້ອຍຄຳ "ໄປນຳກັນ" ໄດ້ມາຈາກຄວາມຄິດໃນພາສາເຮັບເຣີວ່າ ການຟ້າວຟັ່ງ ຄືກັບຝູງຊົນໂຫ່ຮ້ອງແຫ່ຂະບວນເຂົ້າພົບກະສັດ. ແນ່ນອນ ບໍ່ແມ່ນໝົດທຸກຄົນໃນຂໍ້ 7 ເຫັນພ້ອມເປັນເອກະສັນກັບຄວາມຄິດ. ການຮຽກຮ້ອງມັນໂພດເກີນໄປ, ຄືກັນກັບວັຍໜຸ່ມທີ່ກຳລັງປະທ້ວງພໍ່ແມ່ຂອງລາວ, "ແຕ່ທຸກຄົນກໍຍັງເຮັດຄືກັນ."

ບໍ່ວ່າມີຈັກຄົນເຫັນພ້ອມຄວາມຄິດ, ຄຳຖແລງການເປັນຄຳເຕືອນວ່າການກະທຳທີ່ເໝາະສົມບໍ່ໄດ້ຂຶ້ນກັບສຽງສ່ວນຫຼາຍ. ບາງສິ່ງບາງຢ່າງຖືກກົດໝາຍບໍ່ໄດ້ໝາຍຄວາມວ່າຖືກຕ້ອງ. ພວກເຮົາຮູ້ວ່າຄຳຖແລງການຂອງຜູ້ສົມຮູ້ຮ່ວມຄິດແມ່ນຄຳຕົວະ; ແນ່ນອນດານີເອນບໍ່ໄດ້ເຫັນພ້ອມກັບຄວາມຄິດດັ່ງກ່າວ. ການອະທິຖານທັງໝົດແລະຄຳຮ້ອງຂໍຢ່າງເປັນທາງການໂດຍຜ່ານກະສັດ ດາຣິອຸດ ໄດ້ຕັ້ງໃຫ້ເພິ່ນເປັນຕົວແທນຜູ້ດຽວຂອງພະເຈົ້າຕ່າງໆແລະເປັນສຽງສຸດທ້າຍສຳລັບສິດອຳນາດທາງການເມືອງທັງໝົດ. ໂດຍເນື້ອແທ້ແລ້ວ, ໝາຍຄວາມວ່າສາມສິບວັນ, ດາຣິອຸດເປັນຜູ້ຄອບຄອງສວັນແລະແຜ່ນດິນໂລກ, ຢ່າງໜ້ອຍໃນຄວາມຄິດຂອງເພິ່ນ. ຂໍ້ສເນີດັ່ງກ່າວອຸທອນຕໍ່ຄວາມທະນົງຕົວຂອງດາຣິອຸດ, ຄວາມກະຫາຍອຳນາດ ແລະຄວາມບໍ່ປອດພັຍສ່ວນຕົວຂອງເພິ່ນ. ກະສັດໄດ້ລົງນາມໃນຂໍ້ຄຳສັ່ງ, ຊຶ່ງໝາຍຄວາມວ່າຄຳສັ່ງຈະລົບລ້າງບໍ່ໄດ້ (ອຊທ 1:19). ຜູ້ໃດລ່ວງລະເມີດຕ້ອງຕາຍ.

- **ຜູ້ທຳນວາຍອະທິຖານ.** ກົດໝາຍໃໝ່ບໍ່ໄດ້ປ່ຽນການປະພຶດຂອງດານີເອນ. ລາວສືບຕໍ່ອະທິຖານ "ດັ່ງທີ່ເຄີຍເຮັດມາກ່ອນ." ພຣະຄັມພີບໍ່ໄດ້ຮຽກຮ້ອງໃຫ້ບຸກຄົນຄູ້ເຂົ່າແລະອະທິຖານສາມເທື່ອຕໍ່ວັນ. ການກະທຳທີ່ເຫັນໄດ້ແຈ່ມແຈ້ງສະທ້ອນສິ່ງທີ່ເບິ່ງບໍ່ເຫັນຄື ຄຳໝັ້ນສັນຍາໃນໃຈແລະຄວາມຮັກຂອງລາວທີ່ມີຕໍ່ພຣະເຈົ້າ. ດານີເອນຄູ້ເຂົ່າອະທິຖານເປັນສິ່ງຈຳເປັນສຳລັບຜູ້ເຊື່ອແລະມັນປ່ຽນສິ່ງຕ່າງໆ.

ໃນການຖວາຍພຣະວິຫານ, ໂຊໂລໂມນໄດ້ປິ່ນໜ້າໄປທາງເຢຣູຊາເລັມເວລາອະທິຖານ (2 ຂ່າວຄາວ 6:34-39). ວິທີນີ້ໄດ້ສືບຕໍ່ມາຈົນເຖິງຍຸກພຣະຄັມພີໃໝ່. ເປັນຫຍັງຈຶ່ງອວ່າຍໜ້າໄປຫາເຢຣູຊາເລັມ? ພຣະເຈົ້າໄດ້ເປີດເຜີຍການສະຖິດແລະສງ່າຣາສີຂອງພຣະອົງທີ່ນັ້ນ(1 ກສ 8:10-11). ແລະເຖິງແມ່ນ ບາບີໂລນໄດ້ທຳລາຍເຢຣູຊາເລັມແລະພຣະວິຫານກໍຕາມ, ພຣະເຈົ້າໄດ້ສັນຍາຈະກັບຄືນແລະເຜີຍສງ່າຣາສີຂອງພຣະອົງທີ່ນັ້ນອີກ (ອຊກ 42:1-5; ຢຣມ 29:10-14). ການອະທິຖານປິ່ນໜ້າຫາເຢຣູຊາເລັມເປັນສັນຍາລັກຂອງຄວາມເຊື່ອແລະຄວາມຫວັງ. ດານີເອນໄດ້ຍິນກ່ຽວກັບຄຳສັ່ງຂອງດາຣິອຸດ. ຢ່າງໃດກໍຕາມ, ດານີເອນໄດ້ສືບຕໍ່ປະຕິບັດການອະທິຖານຕາມປົກກະຕິຂອງລາວຢ່າງກ້າຫານ. ລາວບໍ່ໄດ້ພຍາຍາມອວດອ້າງຄວາມບໍ່ເຊື່ອຟັງຫຼືດຶງດູດຄວາມສົນໃຈໃສ່ຕົວເອງ. ລາວເຮັດສິ່ງລາວເຄີຍເຮັດສາມເທື່ອຕໍ່ວັນເປັນເວລາຫົກປີກວ່າໃນບາບີໂລນຄື ລາວຄູ້ເຂົ່າ, ຫັນໜ້າໄປທາງເຢຣູຊາເລັມ, ແລະຖວາຍການອະທິຖານແລະຂອບຄຸນພຣະເຈົ້າ. ແຕ່ຫາກວ່າການອະທິຖານດຽວນີ້, ໄດ້ຕົກຢູ່ໃນສະຖານະໃໝ່, ຄືຜິດກົດໝາຍ. ພວກເຮົາສາມາດຮຽນຮູ້ຫຍັງກ່ຽວກັບຊີວິດການອະທິຖານຂອງດານີເອນຈາກຄຳບັນລະຍາຍນີ້? ດານີເອນອະທິຖານເປັນປະຈຳ. ລາວໄດ້ຕັ້ງເວລາແຕ່ລະວັນເພື່ອອະທິຖານ, ຊຶ່ງໝາຍຄວາມວ່າ ການອະທິຖານເປັນສິ່ງສຳຄັນອັນດັບນຶ່ງ. ລາວອະທິຖານດ້ວຍຄວາມຖ່ອມໃຈ ແລະການຂອບພຣະຄຸນ, ໂດຍບໍ່ອາຍ ແລະດ້ວຍຄວາມຄາດຫວັງ, ເຊື່ອວ່າພຣະເຈົ້າຊົງຮັກສາຄຳສັນຍາຂອງພຣະອົງ. ດານີເອນໄດ້ວາງຮູບແບບເພື່ອເຮົາປະຕິບັດຕາມຈົນເຖິງທຸກວັນນີ້.

*ທ່ານໄດ້ຮັບຜົນກະທົບສ່ວນຕົວແນວໃດຈາກການປ່ຽນແປງວັທນາທັມຂອງເຮົາ?*

## 2. <u>ດານີເອນ 6:11-13.</u>

*11 ແລ້ວຄົນເຫຼົ່ານີ້ກໍໄດ້ສັງເກດເຫັນດານີເອນອ້ອນວອນຕໍ່ພຣະເຈົ້າ ພວກເຂົາທັງໝົດຈຶ່ງພາກັນໄປຟ້ອງດານີເອນຕໍ່ພຣະຣາຊາ. 12 ທູນ*
*ວ່າ, "ຂ້າແດ່ພຣະຣາຊາ ພຣະອົງໄດ້ຊົງລົງພຣະນາມໃນຄຳສັ່ງທີ່ວ່າ ໃນສາມສິບມື້ຕໍ່ໄປນີ້ ຖ້າບຸກຄົນຜູ້ໃດທູນຂໍ ສິ່ງນຶ່ງສິ່ງໃດຈາກ*
*ພະ ຫລືຄົນໃດໆ ຈະຕ້ອງຖືກໂຍນເຂົ້າໄປໃນຖໍ້າສິງ ເວັ້ນໄວ້ແຕ່ທູນຂໍຈາກພຣະອົງ." ພຣະຣາຊາຊົງກ່າວຕອບວ່າ,"ແມ່ນແລ້ວ ເປັນ*
*ຄຳສັ່ງທີ່ເດັດດ່ຽວຕາມກົດໝາຍຂອງເມເດັຽ ແລະເປີເຊັຽ ຈະແກ້ໄຂປ່ຽນແປງບໍ່ໄດ້. 13 ແລ້ວພວກເຂົາໄດ້ກາບທູນອົງພຣະຣາຊາວ່າ,*

*"ດານີເອນ ຜູ້ເປັນຊະເລີຍຄົນນຶ່ງທີ່ຖືກກວາດຕ້ອນມາຈາກຢູດາ ລາວບໍ່ໄດ້ເຄົາລົບພຣະຣາຊາ ຫຼືເຊື່ອຟັງຄຳສັ່ງທີ່ພຣະອົງຊົງປະກາດອອກໄປ ລາວໄດ້ອ້ອນວອນຕໍ່ພຣະເຈົ້າຂອງລາວມື້ລະສາມເທື່ອເປັນປະຈຳ."*

ທ່ານຄິດວ່າພວກກ່າວຫາຂອງດານີເອນຈ້ອງມອງຜ່ານປ່ອງຢ້ຽມຂອງລາວ, ລໍຖ້າລາວອະທິຖານ? ຄຳກິຣິຍາພາສາເຮັບເຣີແປວ່າ "ໄປເປັນກຸ່ມ" ໃນຂໍ້ 11 ນຳຄວາມຄິດມາວ່າເຂົາເຮັດນຳກັນດ້ວຍເຈຕນາຮ້າຍ. ໃນພາສາອັງກິດ, ມັນເປັນຄວາມແຕກຕ່າງຣະຫວ່າງການວາງແຜນ ແລະການອອກກົນອຸບາຍ.

- **ຜູ້ຄິດທຳຮ້າຍ.** ທັນທີທີ່ເຂົາເຫັນດານີເອນອະທິຖານ, ພວກເຂົາກໍເລີ້ມລົງມືທັນທີ. ພວກທີ່ຊັກຈູງກະສັດດາຣິອຸດໃຫ້ອອກຄຳສັ່ງບັດນີ້ກໍຟ້າວໄປຫາກະສັດເພື່ອບັງຄັບໃຊ້ຄຳສັ່ງນັ້ນ. ນີ້ແມ່ນຄວາມຕັ້ງໃຈອັນຊົ່ວຮ້າຍຂອງເຂົາທັງໝົດ. ເຂົາໄດ້ທວງຂໍ້ຄຳສັ່ງນຳດາຣິອຸດ-ຄວາມຜິດແລະການລົງໂທດ-ແລະຂໍໃຫ້ພຣະອົງຮັບປາກທີ່ຈະບັງຄັບໃຊ້ຂໍ້ຄຳສັ່ງນັ້ນ. ພຽງແຕ່ ຫຼັງຈາກນັ້ນຄົນກຸ່ມນີ້ກໍໄດ້ບົ່ງຕົວຜູ້ກະທຳຜິດ. ເຂົາຕ້ອງການພັກດັນໃຫ້ກະສັດບໍ່ມີທາງອອກ, ແລະກໍໄດ້ຜົນ. ເໝືອນຊາຕານ, ພວກເຮົາພົບວ່າຜູ້ຄິດທຳຮ້າຍດານີເອນໄດ້ຕົວະ, ຫຼອກລວງ, ແລະກ່າວຫາລາວຕໍ່ໜ້າບັນລັງດ້ວຍຕັ້ງໃຈຈະຂ້າລາວ. ສົງຄາມໃນທີ່ນີ້ບໍ່ແມ່ນດ້ານຮ່າງກາຍ, ຫຼືດ້ານການເມືອງ; ມັນແມ່ນສົງຄາມຝ່າຍວິນຍານ.
- **ຂໍ້ຂັດແຍ້ງ.** ເຫດການບັງຄັບໃຫ້ພວກເຮົາຖາມຕົວເອງວ່າ ພວກເຮົາຄວນເຮັດແນວໃດ ເມື່ອປະເຊີນກັບການເຊື່ອຟັງສິ່ງທີ່ພຣະເຈົ້າກ່າວແລະກົດໝາຍ ເມື່ອສອງຢ່າງຂັດແຍ່ງກັນ. ພຣະຄັມພີສອນພວກເຮົາວ່າພວກເຮົາຕ້ອງເຊື່ອຟັງກົດໝາຍ, ແຕ່ບັນຍັດຂອງພຣະເຈົ້າຕ້ອງມາກ່ອນເໜືອກວ່າກົດໝາຍຂອງມນຸດ. ຂນະທີ່ໂລກນີ້ກາຍເປັນທາງໂລກຫຼາຍຍິ່ງຂຶ້ນ, ມັນຈະມີເວລາໃນການເຊື່ອຟັງພຣະຄຳຂອງພຣະເຈົ້າຫຼືກົດໝາຍຂອງມນຸດຈະຢູ່ໃນທາງກົງກັນຂ້າມໂດຍກົງ. ພວກເຮົາຈະຖືກບັງຄັບໃຫ້ຊັ່ງຊາຜົນທີ່ຈະຕາມມາ ແລະຕັດສິນໃຈວ່າຈະເຊື່ອຟັງໃຜ.

*ມີຄວາມໝາຍຫຍັງໃນການຖວາຍກຽດພຣະເຈົ້າໃນຊີວິດວັນຕໍ່ວັນຂອງເຮົາ?*

## 3. ດານີເອນ 6:16-17, 21-23.

*16 ຕໍ່ມາ ພຣະຣາຊາຊົງອອກຄຳສັ່ງໃຫ້ເອົາດານີເອນໂຍນເຂົ້າໄປໃນຖໍ້າສິງ ພຣະອົງຊົງກ່າວຕໍ່ດານີເອນວ່າ, "ຂໍພຣະເຈົ້າຂອງທ່ານ ຜູ້*
*ທີ່ທ່ານໄດ້ຮັບໃຊ້ດ້ວຍຄວາມຈົງຮັກພັກດີນັ້ນ ຈົ່ງຊ່ອຍເຫລືອທ່ານສາ."*
*17 ແລ້ວພວກເຂົາໄດ້ນຳກ້ອນຫີນມາອັດປາກຖໍ້າໄວ້ ພຣະຣາ-*
*ຊາໄດ້ຊົງປະທັບຕາຂອງພຣະອົງ ແລະຕາຂອງເຈົ້ານາຍຊັ້ນສູງໃສ່ໃນກ້ອນຫີນ ເພື່ອບໍ່ໃຫ້ໃຜຊ່ອຍເຫຼືອດານີເອນໄດ້.*
*21–22 ດານີເອນ*
*ໄດ້ທູນຕອບວ່າ, "ຂໍຈົ່ງຊົງພຣະຈະເລີນເທີ້ນ ພຣະເຈົ້າຊົງໃຊ້ເທວະດາຂອງພຣະອົງມາອັດປາກສິງໄວ້ ເພື່ອບໍ່ໃຫ້ມັນທຳຮ້າຍຂ້າ*
*ນ້ອຍ ຂ້າແດ່ພຣະຣາຊາ ພຣະເຈົ້າຊົງເຮັດດັ່ງນີ້ຍ້ອນພຣະອົງຊົງຊາບວ່າ ຂ້ານ້ອຍບໍ່ມີຄວາມຜິດຫຍັງເລີຍ ແລະຍ້ອນຂ້ານ້ອຍບໍ່ໄດ້*
*ເຮັດຜິດຫຍັງຕໍ່ພຣະຣາຊາ."*
*23 ພຣະຣາຊາໄດ້ຊົງຊົມຊື່ນຍິນດີທີ່ສຸດ ແລະມີຄຳສັ່ງໃຫ້ນຳເອົາດານີເອນຂຶ້ນມາຈາກຖໍ້າ ດັ່ງນັ້ນພວກ*
*ເຂົາຈຶ່ງຊ່ອຍກັນເອົາດານີເອນຂຶ້ນມາ ແລະບໍ່ປາກົດວ່າເພິ່ນໄດ້ຖືກທຳຮ້າຍເລີຍ ຍ້ອນວ່າເພິ່ນໄດ້ໄວ້ວາງໃຈໃນພຣະເຈົ້າ.*

ການລົງໂທດຢ່າງທາຣຸນເປັນເຣື່ອງທັມມະດາໃນເຂດໃກ້ຕາເວັນອອກ ສມັຍດຶກດຳບັນ. ກະສັດເປີເຊັຽໄດ້ລົງໂທດແບບໂຫດຮ້າຍແລະການປະຫານຊີວິດ.

- **ການປະຫານຊີວິດ.** ແຕ່ ດານີເອນຮັບຮູ້ວ່າເປັນຕົວຢ່າງດຽວຈາກເຂດໃກ້ຕາເວັນອອກແຕ່ກ່ອນ ເປັນຜູ້ທີ່ຖືກຖິ້ມລົງໃນຖໍ້າສິງ. ຕັ້ງແຕ່ດາຣິອຸດໄດ້ອອກພຣະຣາຊດຳຣັດຕິດຕາມດ້ວຍໂທດທັນ, ພຣະອົງເປັນຜູ້ປະທັບຕາໃສ່ທາງເຂົ້າໄປຫາຖໍ້າສິງ. ຖໍ້າຫຼືຂຸມສິງໄປໃນບ່ອນທີ່ດານີເອນຖືກຖິ້ມລົງເປັນອ່າງເກັບນໍ້າໃຕ້ດິນແຫ້ງທີ່ຄົນບໍ່ໄດ້ໃຊ້ເກັບນໍ້າແລ້ວ. ບາງຄັ້ງຖືກໃຊ້ເປັນທີ່ຄຸມຂັງ. ໃນທີ່ສຸດເມື່ອດານີເອນຖືກນຳຂຶ້ນມາຈາກຖໍ້າສິງ, ຄືຊິແມ່ນດ້ວຍເຊືອກ (ຂໍ້ 23).
- **ຄວາມເຊື່ອຂອງດານີເອນ.** ຕອນນີ້ ດານີເອນມີອາຍຸກວ່າແປດສິບປີແລ້ວ. ຄວາມຮັກທີ່ບໍ່ເສື່ອມຄາຍແລະການອຸທິດຕົນທີ່ບໍ່ເສື່ອມຄາຍຂອງລາວທີ່ມີຕໍ່ພຣະເຈົ້າຢາເວກໍເປັນທີ່ປາກົດແຈ້ງສເມີ. ດານີເອນບໍ່ເຄີຍເຊື່ອງຄວາມເຊື່ອຂອງລາວແຕ່ໄດ້ດຳເນີນຊີວິດເພື່ອພຣະ

ເຈົ້າຢ່າງກ້າຫານ. ແມ້ກະທັ້ງກະສັດດາຣິອຸດກໍຊົງຊາບຄວາມເຊື່ອທີ່ບໍ່ສັ່ນຄອນຂອງດານີເອນ. ສິ່ງກົງກັນຂ້າມກັບສິ່ງທີ່ກະສັດເຫັນໃນດານີເອນ ແລະຄຳກ່າວຫາຂອງພວກຜູ້ທຳນວາຍເປັນທີ່ປະຈັກແຈ້ງ. ດານີເອນມີຄວາມສັດຊື່; ພວກເຂົາຕ່າງຫາກທີ່ຫຼອກລວງ. ດານີເອນຈິງໃຈຕໍ່ພຣະເຈົ້າ; ພວກເຂົາຕົວະກະສັດ. ດາຣິອຸດສຳນຶກໄດ້ເຖິງເຈຕນາຂອງພວກກ່າວຫາແມ່ນເພື່ອທຳລາຍດານີເອນ, ບໍ່ແມ່ນເພື່ອຖວາຍກຽດແດ່ພຣະຣາຊາ. ຄວາມຕັ້ງໃຈຂອງດານີເອນແມ່ນເພື່ອຖວາຍກຽດແດ່ພຣະເຈົ້າຂອງລາວ, ຜູ້ທີ່ລາວຮັບໃຊ້ຕລອດມາ. ການຮ້ອງລົງໄປໃນຖ້ຳສິງ, ດາຣິອຸດຢືນຢັນຄວາມຫວັງຂອງເພິ່ນວ່າ ພຣະເຈົ້າຂອງດານີເອນຈະຊ່ອຍກູ້ລາວໃຫ້ລອດພົ້ນ (ຂໍ້ 16).

ຫຼັງຈາກຄືນນັ້ນນອນບໍ່ຫຼັບ, ດາຣິອຸດຮີບໄປຫາຖ້ຳແລະໄດ້ຮ້ອງຫາດານີເອນອີກ. ຄຳເວົ້າຂອງເພິ່ນສະທ້ອນໃຫ້ເຫັນຄວາມເຊື່ອໝັ້ນໃໝ່ວ່າ-ຄວາມລອດພົ້ນເປັນໄປໄດ້ກໍຕໍ່ເມື່ອ ມີການເຂົ້າແຊກແຊງຂອງພຣະເຈົ້າຜູ້ຊົງພຣະຊົນຢູ່ ຜູ້ທີ່ດານີເອນຮັບໃຊ້ເທົ່ານັ້ນ. ກະສັດດາຣິອຸດໄດ້ເຫັນຄວາມເຊື່ອໝັ້ນຂອງດານີເອນທີ່ມີຕໍ່ພຣະເຈົ້າ, ຄວາມເຊື່ອໝັ້ນທີ່ພາໃຫ້ດາຣິອຸດຄິດວ່າບາງທີ, ພຽງແຕ່ບາງທີ, ດານີເອນເປັນຜູ້ຖືກ ກ່ຽວກັບພຣະເຈົ້າຜູ້ຊົງພຣະຊົນຢູ່. ທ່າທີຂອງດາຣິອຸດເຊົ້າວັນນັ້ນໃຊ້ເປັນສິ່ງເຕືອນໃຈເຮົາວ່າມີຄົນກຳລັງເບິ່ງເຮົາ, ໂດຍສະເພາະໃນເວລາຫຍຸ້ງຍາກສັບສົນ. ຄວາມສັດຊື່ຂອງເຮົາສາມາດສົ່ງຜົນກະທົບຕໍ່ສິ່ງທີ່ຄົນບໍ່ເຊື່ອຄິດກ່ຽວກັບພຣະເຈົ້າ. ຄວາມສວ່າງຂອງເຮົາສາມາດສ່ອງໃນຄວາມມືດ ແລະເຮັດໃຫ້ຄົນເຫັນພຣະບິດາ.

ພຽງແຕ່ຄວາມຈິງທີ່ດາຣິອຸດໄດ້ໄປກວດເບິ່ງດານີເອນເຊົ້າວັນນັ້ນເປັນສິ່ງພິສູດຢ່າງໜ້ອຍພຣະຣາຊາຄິດວ່າດານີເອນເປັນຄົນຖືກ. ເມື່ອໄດ້ຍິນສຽງຂອງດາຣິອຸດ, ດານີເອນຖວາຍກຽດແດ່ພຣະເຈົ້າທັນທີ. ໂລກຂອງດານີເອນໄດ້ປ່ຽນມາຕຖານສູ່ພຶດຕິກັມທີ່ຍອມຮັບໄດ້. ເຖິງຢ່າງໃດກໍຕາມ, ດານີເອນບໍ່ໄດ້ຍອມຮັບມາຕຖານນັ້ນ. ລາວຍັງຮັກສາຄວາມສັດຊື່ຕໍ່ພຣະເຈົ້າ, ໂດຍບໍ່ກ່ຽວກັບສະຖານະການ. ລາວເຕັມໃຈຈ່າຍລາຄາສູງສຸດສຳລັບຄວາມເຊື່ອຂອງລາວ. ໂລກທີ່ປ່ຽນແປງຂອງເຮົາຢາກໃຫ້ເຮົາຮັບເອົາມາຕຖານທີ່ຂັດກັບພຣະທັມຂອງພຣະເຈົ້າເພີ້ມຂຶ້ນເລື້ອຍໆ. ການທ້າທາຍຂອງພວກເຮົາແມ່ນຮັກສາຄວາມສັດຊື່ຕໍ່ພຣະອົງ, ບໍ່ກ່ຽວກັບຣາຄາທີ່ຕ້ອງຈ່າຍ.

*ການປະຕິບັດຝ່າຍວິນຍານຫຼືນິສັຍຈະກະຕຽມເຮົາໃຫ້ຢືນຢູ່ຢ່າງໝັ້ນຄົງໃນການປະເຊີນໜ້າກັບການຕໍ່ຕ້ານຢ່າງໃດ?*

## ນຳໃຊ້ໃນຊີວິດ

ພວກເຮົາຄວນເຮັດສິ່ງຖືກຕ້ອງໃນພຣະກຳລັງຂອງພຣະເຈົ້າ. ຈົ່ງເລືອກການນຳໃຊ້ຂໍ້ໃດຂໍ້ນຶ່ງຕໍ່ລົງໄປນີ້:

- **ຈົ່ງສະແດງຄວາມຂອບຄຸນພຣະເຈົ້າ.** ເມື່ອທ່ານຕື່ນຂຶ້ນມາ ສິ່ງແລກທີ່ທ່ານຄວນທຳແມ່ນຄິດເຖິງສິ່ງນຶ່ງ, ຄົນນຶ່ງ, ຫຼືສະຖານການທີ່ທ່ານຄວນຂອບຄຸນ. ໃຊ້ເວລາໃນມື້ເວັນເພື່ອຍົກຍ້ອງພຣະເຈົ້າ. ເລືອກສິ່ງແຕກຕ່າງສຳລັບມື້ອື່ນ.
- **ຈົ່ງອະທິຖານຢ່າງສັດຊື່.** ຖ້າທ່ານບໍ່ເຄີຍເຮັດເທື່ອ, ຈົ່ງຈັດບ່ອນນຶ່ງໃນເຮືອນຂອງທ່ານເພື່ອເປັນ"ຕູ້"ອະທິຖານ.ແຕ່ລະວັນໃນອາທິດນີ້, ໃຊ້ເວລາຢູ່ຫັ້ນ, ອ່ານພຣະຄັມພຣະເຈົ້າແລະອະທິຖານ.
- **ຈົ່ງກວດເບິ່ງຊີວິດຂອງທ່ານ.** ມີມາຕຖານໃດບໍ່ທີ່ໂລກວາງໄວ້ທີ່ກົງກັນຂ້າມກັບພຣະທັມພຣະເຈົ້າ, ແຕ່ທ່ານໄດ້ໂອບກອດເອົາສິ່ງນັ້ນບໍ່? ຈົ່ງຕຶກຕອງເບິ່ງວ່າມີການປ່ຽນແປງໃດບໍ່ທີ່ທ່ານສາມາດປ່ຽນຫຼືຕ້ອງເຮັດ ເພື່ອຊ່ອຍທ່ານສັດຊື່ຕໍ່ສິ່ງທີ່ເປັນນ້ຳພຣະທັຍພຣະເຈົ້າ. ແມ່ນຫຍັງຄືສິ່ງນຶ່ງທີ່ທ່ານຈະຕ້ອງປ່ຽນກ່ອນໝູ່?

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ PSI**